# ພິທີເຊັນບົດບັນທຶກຄວາມເຂົ້າໃຈ ລະຫວ່າງ ທະນາຄານແຫ່ງ ສປປ ລາວ ແລະ ອົງການການເງິນສາກົນ (IFC)



ໃນວັນທີ 26 ກັນຍາ 2022 ຜ່ານມານີ້ທີ່ ທະນາຄານແຫ່ງ ສປປ ລາວ ໄດ້ຈັດພິທີເຊັນບົດບັນທຶກຄວາມເຂົ້າໃຈ ລະຫວ່າງ ທະນາຄານແຫ່ງ ສປປ ລາວ ແລະ ອົງການການເງິນສາກົນ ຫຼື International Finance Corporation (IFC) ພາຍໃຕ້ໂຄງການຊ່ວຍເຫຼືອດ້ານວິຊາການໃນວຽກງານການເງິນສີຂຽວ ໂດຍການໃຫ້ກຽດເຂົ້າຮ່ວມເປັນສັກຂີພະຍານໂດຍ ທ່ານ ບຸນເຫຼືອ ສິນໄຊວໍຣະວົງ ຜູ້ວ່າການ ທະນາຄານແຫ່ງ ສປປ ລາວ ແລະ ທ່ານ ນາງ ຊູນຊານ ລຸນ (Susan Lund) ຮອງປະທານອົງການ IFC ຜູ້ຊີ້ນຳວຽກງານເສດຖະສາດ ແລະ ການພັດທະນາຂະແໜງການເອກະຊົນ ພ້ອມດ້ວຍການເຂົ້າຮ່ວມຂອງຄະນະນຳ ທຫລ ແລະ ອົງການ IFC ທີ່ໄດ້ເຂົ້າຮ່ວມໃນພິທີຄັ້ງນີ້ ຊຶ່ງຕາງໜ້າໃຫ້ທະນາຄານແຫ່ງ ສປປ ລາວ ໃນການລົງນາມໂດຍແມ່ນ ທ່ານ ນາງ ແພງສີ ແພງເມືອງ ຫົວໜ້າກົມຮ່ວມມືສາກົນ ແລະ ຕາງໜ້າໃຫ້ອົງການ IFC ໂດຍແມ່ນ ທ່ານ Thomas James Jacobs ຫົວໜ້າບໍລິຫານ ປະຈຳ ສປປ ລາວ, ຫວຽດນາມ ແລະ ກຳປູເຈຍ.





ການເຊັນບົດບັນທຶກຄວາມເຂົ້າໃຈພາຍໃຕ້ໂຄງການຊ່ວຍເຫຼືອດ້ານວິຊາການໃນຄັ້ງນີ້, ຈະກາຍເປັນຂີດໝາຍສຳຄັນໃນວຽກງານການເງິນສີຂຽວໃຫ້ມີປະສິດທິພາບໃນເສດຖະກິດຂອງ ສປປ ລາວ ແລະ ການຮ່ວມມືດັ່ງກ່າວນີ້ ຈະເລີ່ມໂດຍການປະເມີນຄວາມພ້ອມຂອງຕະຫຼາດ ເພື່ອທົບທວນຂອບການເງິນສີຂຽວໃນປະຈຸບັນ ແລະ ກຳນົດໂອກາດທາງດ້ານຕະຫຼາດຕ່າງໆ ສຳລັບຜະລິດຕະພັນການເງິນສີຂຽວທີ່ມີທ່າແຮງ; ສິ່ງດັ່ງກ່າວຈະຊ່ວຍໃຫ້ຂະແໜງການເງິນນຳມາພິຈາລະນາປັບປຸງສະພາບແວດລ້ອມທີ່ເອື້ອອຳນວຍໃຫ້ການເງິນສີຂຽວ ໂດຍຜ່ານການສ້າງແຜນຍຸດທະສາດການເງິນທີ່ມີຄວາມຍືນຍົງ, ຂອບປະເມີນຄວາມສ່ຽງດິນຟ້າອາກາດ ສຳລັບລະບົບການເງິນ ແລະ ບັນຊີຂະແໜງການທຸລະກິດສີຂຽວທີ່ປະກອບສ່ວນແກ້ໄຂການປ່ຽນແປງດິນຟ້າອາກາດຢ່າງຄົບຖ້ວນ (Harmonized Green Taxonomy) ລວມທັງລະບຽບການ ແລະ ບົດແນະນຳກ່ຽວກັບການເງິນ ແລະ ພັນທະບັດສີຂຽວໃນເວລາດຽວກັນກໍ່ພັດທະນາຕະຫຼາດການເງິນສີຂຽວໃຫ້ມີຄວາມເຂັ້ມແຂງສອດຄ່ອງກັບມາດຕະຖານສາກົນ ຊຶ່ງນອກຈາກການລິເລີ່ມການຮ່ວມມືວຽກງານການເງິນສີຂຽວກັບຄູ່ຮ່ວມພັດທະນາເຊັ່ນ IFC ແລ້ວ, ໃນໄລຍະຜ່ານມາ ທຫລ ຍັງໄດ້ປະກອບສ່ວນເຂົ້າໃນວຽກງານການເງິນແບບຍືນຍົງ (Sustainable Finance) ຂອງພາກພື້ນອາຊຽນອີກດ້ວຍ. ນອກຈາກການລົງນາມເຊັນ MOU ຮ່ວມກັນ ສອງຝ່າຍຍັງໄດ້ມີການປຶກສາຫາລື ແລະ ແລກປ່ຽນຄຳເຫັນກ່ຽວກັບສະພາບແວດລ້ອມໃນການດຳເນີນທຸລະກິດຢູ່ ສປປ ລາວ ແລະ ຊອກຫາຊ່ອງທາງຄວາມເປັນໄປໄດ້ໃນການລົງທຶນຂອງອົງການ IFC ໂດຍສະເພາະແມ່ນການໃຫ້ບໍລິການຄຳປຶກສາໃຫ້ແກ່ພາກທຸລະກິດ ເພື່ອພັດທະນາທຸລະກິດພາກເອກະຊົນ ຢູ່ ສປປ ລາວ ໃຫດີຂຶ້ນ.

**ຂ່າວໂດຍ: ພະແນກຮ່ວມມືອົງການການເງິນສາກົນ, ກົມຮ່ວມມືສາກົນ**

**ພາບ: ສົມພິດ ທາມະວົງ**

***ຢູ່ເມືອງລາວ ໃຊ້ແຕ່ເງິນກີບລາວ***